ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ແຂວງບໍລິຄໍາໄຊ

ສະພາປະຊາຊົນແຂວງ

ເລກທີ....04..../ສພຂ.ຂບຊ

ບໍລິຄໍາໄຊ, ວັນທີ ..... ມັງກອນ 2022

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງບໍລິຄໍາໄຊ
ວ່າດ້ວຍນະໂຍບາຍ ແລະ ທຶນໜ່ວຍທົດແທນຄ່າເສຍຫາຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບ
ຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງປາກຊັນ

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015, ມາດຕາ 11 ກ່ຽວກັບການພິຈາລະນາ ແລະ ຮັບຮອງເອົານິຕິກໍາທີ່ສໍາຄັນຂອງທ້ອງຖິ່ນ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງບໍລິຄໍາໄຊ ຊຸດທີ II ໄດ້ຄົ້ນ ຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງຂໍ້ຕົກລົງ ຂອງທ່ານເຈົ້າແຂວງບໍລິຄໍາໄຊ ວ່າດ້ວຍ ນະໂຍບາຍ ແລະ ທຶນໜ່ວຍທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງ ໄພພິບັດນໍ້າຖ້ວມເທດສະບານເມືອງປາກຊັນ ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 7 ມັງກອນ 2022.

## ກອງປະຊຸມສະພາປະຊາຊົນແຂວງ ຕົກລົງ:

ມາດຕາ 1: ຮັບຮອງເອົາຂໍ້ຕົກລົງ ຂອງທ່ານເຈົ້າແຂວງບໍລິຄໍາໄຊ ວ່າດ້ວຍນະໂຍບາຍ ແລະ ທຶນໜ່ວຍທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມເທດສະບານເມືອງປາກຊັນ, ແຂວງບໍລິຄໍາໄຊ ດ້ວຍຄະແນນສຽງເຫັນດີເປັນເອກະສັນ.

ມາດຕາ 2: ມອບໃຫ້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ປະກາດໃຊ້ຢ່າງເປັນທາງການ.

ມາດຕາ 3: ມອບໃຫ້ບັນດາທ່ານຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການ, ສະມາຊິກສະພາປະຊາຊົນແຂວງ, ພາກສ່ວນກ່ຽວຂ້ອງ ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ມາດຕາ 4: ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງບໍລິຄໍາໄຊ

ປ.ອ ສຸວັນນີ ໄຊຊະປະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ເລກທີ.147.../ຂບຊ

ບໍລິຄຳໄຊ, ວັນທີ.15 ມີ.ນາ 2022

# ຂໍ້ຕົກລົງ

## ວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ເທດສະບານເມືອງປາກຊັນ ແຂວງບໍລິຄຳໄຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ2019.
- ອີງຕາມ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016.
- ອີງຕາມ ສັນຍາເງິນກູ້ ແລະ ການຊ່ວຍເຫຼືອລ້າ ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ທະນາຄານໂລກ ສະບັບເລກທີ IDA Credit No. 6518-LA, ລົງວັນທີ 28 ມັງກອນ 2020.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ສະບັບເລກທີ 03/ສພຂ. ຂບຊ, ລົງວັນທີ 20 ມັງກອນ 2022.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ, ເງື່ອນໄຂນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບຈາກໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ເທດສະບານເມືອງປາກຊັນ ແຂວງບໍລິຄຳໄຊ ເພື່ອປະຕິບັດຕາມນະໂຍບາຍຂອງລັດ, ຜູ້ໃຫ້ທຶນ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ຄວາມຮັບຜິດຊອບ, ປະກອບສ່ວນພັດທະນາໄປຄຽງຄູ່ກັບແຜນຍຸດທະສາດຂອງແຂວງບໍລິຄຳໄຊ ໃນແຕ່ລະໄລຍະ.

**ມາດຕາ 2 ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

ນະໂຍບາຍການທົດແທນຄ່າເສຍຫາຍ ແມ່ນການກຳນົດເງື່ອນໄຂ ເພື່ອເປັນຫຼັກຖານການທົດແທນຄ່າເສຍຫາຍຈາກໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ເທດສະບານເມືອງປາກຊັນ ແຂວງບໍລິຄຳໄຊ ຕໍ່ຜູ້ທີ່ຖືກຜົນກະທົບເຊິ່ງປະກອບມີເນື້ອທີ່ດິນ, ສິ່ງປຸກສ້າງ, ຕົ້ນໄມ້ ແລະ ຄ່າເສຍໂອກາດ.

ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຜົນກະທົບ ແມ່ນອັດຕາການຄິດໄລ່ທີ່ເປັນພື້ນຖານຕໍ່ຊັບສິນຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ໝາຍເຖິງໂຄງການລົງທຶນຂອງລັດ ເຊິ່ງໄດ້ກຳນົດລະອຽດບັນດາກິດຈະກຳໜ້າວຽກ ລວມທັງຂັ້ນຕອນ, ວິທີການ, ງົບປະມານ ແລະ ເວລາໃນການຈັດຕັ້ງປະຕິບັດ.

2. ເຈົ້າຂອງໂຄງການ ໝາຍເຖິງກົມທາງນ້ຳ, ກະຊວງໂຍທາທິການ ແລະ ຂົນສົ່ງ ເຊິ່ງມີໜ້າທີ່ຮັບຜິດຊອບໃນການສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ຈັດຕັ້ງປະຕິບັດໂຄງການ.

3. ໂຄງການພັດທະນາ ໝາຍເຖິງໂຄງການລົງທຶນ ຫຼື ກິດຈະກຳໃດໜຶ່ງທີ່ມີການກໍ່ສ້າງ, ປັບປຸງ ແລະ ສ້ອມແປງເພື່ອຍົກລະດັບ ແລະ ຄຸນນະພາບໃຫ້ດີຂຶ້ນ.

4. ຜູ້ທີ່ໄດ້ຮັບຜົນກະທົບ ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກຜົນກະທົບຈາກການພັດທະນາໂຄງການ ບໍ່ວ່າທາງກົງ ຫຼື ທາງອ້ອມ ເຊິ່ງໄດ້ຂຶ້ນບັນຊີຕາມຂໍ້ມູນທີ່ໄດ້ສຳຫຼວດຕົວຈິງ.

5. ການຍົກຍ້າຍ ໝາຍເຖິງການຍົກຍ້າຍທີ່ຢູ່ອາໄສ ແລະ ສິ່ງປຸກສ້າງ ຂອງຜູ້ທີ່ຖືກຜົນກະທົບອອກຈາກເຂດພື້ນທີ່ການກໍ່ສ້າງຂອງໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ເທດສະບານເມືອງປາກຊັນ ໄປອາໄສຢູ່ບ່ອນໃໝ່.

6. ຕົ້ນໄມ້ອຸດສະຫະກຳ ໝາຍເຖິງໄມ້ດູ່, ໄມ້ຂະຍຸງ, ໄມ້ສັກ, ໄມ້ແຕ້ຂ່າ, ໄມ້ແຄນ, ໄມ້ເປືອຍ, ໄມ້ຄາຍໂສ້ ແລະ ໄມ້ສຳສາ.

7. ຕົ້ນໄມ້ໃຫ້ໝາກ ໝາຍເຖິງຕົ້ນພ້າວ, ຕົ້ນລຳໄຍ, ຕົ້ນມ່ວງ, ຕົ້ນໝາກຂາມ, ຕົ້ນໝາກນ້ຳນົມ, ຕົ້ນໝາກສີດາ, ຕົ້ນໝາກເງາະ, ຕົ້ນໝາກລິ້ນຈີ່, ຕົ້ນໝາກພຸກ, ຕົ້ນໝາກອາໂວ້ກາໂດ້, ຕົ້ນໝາກກອກ ແລະ ຕົ້ນໝາກມີ້.

8. ຜົນລະປູກ ໝາຍເຖິງສຸມກ້ອຍ, ສຸມອ້ອຍ, ສຸມຂ່າ ແລະ ຫຍ້າລ້ຽງສັດ.

9. ການສູນເສຍລາຍໄດ້ ໝາຍເຖິງການສູນເສຍລາຍໄດ້ຈາກການປິດກິດຈະການ ໃນໄລຍະການກໍ່ສ້າງໂຄງການ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດຊຸກຍູ້ຜູ້ລົງທຶນພັດທະນາໂຄງການ ປະກອບສ່ວນເຂົ້າໃນການທົດແທນຄ່າເສຍຫາຍຕໍ່ຜົນກະທົບຊັບສິນຂອງປະຊາຊົນ ດ້ວຍການແຕ່ງຕັ້ງຄະນະກຳມະການໄກ່ເກ່ຍ-ຈັດສັນ, ທົດແທນ ແລະ ແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ເພື່ອຮັບປະກັນໃຫ້ໂຄງການດຳເນີນ ແລະ ບັນລຸຜົນສຳເລັດ ຕາມແຜນການທີ່ກຳນົດໄວ້.

ລັດຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ຊ່ວຍການພັດທະນາໂຄງການ ເປັນຕົ້ນແມ່ນການປະກອບສ່ວນຢ່າງຕັ້ງໜ້າດ້ານເຫື່ອແຮງ, ຈິດໃຈ, ຊັບສິນ ແລະ ວັດຖຸອື່ນໆ ໂດຍສອດຄ່ອງຕາມແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບທີ່ໄດ້ກຳນົດໄວ້.

ລັດເປີດກວ້າງໃຫ້ທຸກພາກສ່ວນສະແດງຄວາມຄິດເຫັນ ແລະ ສະເໜີບັນຫາຕ່າງໆຕໍ່ຄ່າເສຍຫາຍ ເພື່ອໃຫ້ມີຄວາມເປັນເອກະພາບໃນການແກ້ໄຂຕໍ່ຜູ້ທີ່ໄດ້ຮັບຜົນກະທົບ.

ລັດປົກປ້ອງສິດຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ທີ່ໄດ້ຮັບຜົນກະທົບຢ່າງສະເໝີພາບ, ມີປະສິດທິຜົນ ແລະ ມີຄວາມສະຫງົບ.

**ມາດຕາ 5 ຫຼັກການພື້ນຖານໃນການກຳນົດ ນະໂຍບາຍ ແລະ ລາຄາ ຫຼືອໜ່ວຍທົດແທນຄ່າເສຍຫາຍ**

ການກຳນົດນະໂຍບາຍ ແລະ ລາຄາຫຼືອໜ່ວຍທົດແທນຄ່າເສຍຫາຍ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ເທດສະບານເມືອງປາກຊັນ ແຂວງບໍລິຄຳໄຊ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ປັບປຸງດ້ານຊີວິດການເປັນຢູ່ຂອງຜູ້ທີ່ໄດ້ຮັບຜົນກະທົບໃຫ້ດີຂຶ້ນກວ່າເກົ່າ.

2. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ວິໄສທັດ, ຍຸດທະສາດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ.

3. ມີການປະສານສົມທົບ, ປຶກສາຫາລືລະຫວ່າງການຈັດຕັ້ງ, ພາກສ່ວນທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການ ແລະ ຜູ້ທີ່ຖືກຜົນກະທົບຈາກໂຄງການ.

4. ຮັບປະກັນສິດຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

5. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

6. ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ມີຄວາມຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ ຢູ່ໃນຂອບເຂດ 03 ບ້ານຄື: ບ້ານຫ້ວຍສຽດ, ບ້ານອານຸສອນໄຊ ແລະ ບ້ານປາກຊັນ ຊຶ່ງມີຜົນກະທົບຈຳນວນ 28 ຄອບຄົວ, ນອນຢູ່ໃນເນື້ອທີ່ຂອງໂຄງການຈຳນວນ 62,240 ຕາແມັດ.

## ໝວດທີ 2
## ການກຳນົດປະເພດ ຊັບສິນທີ່ໄດ້ຮັບ ຜົນກະທົບ

**ມາດຕາ 7 ການກຳນົດປະເພດຊັບສິນ**

ການກຳນົດປະເພດຂອງຊັບສິນ ໃນຂອບເຂດໂຄງການຄວບຄຸມຄວາມສ່ຽງໄພພິບັດນ້ຳຖ້ວມ, ປະກອບມີ 03 ປະເພດຕົ້ນຕໍຄື:

1. ປະເພດທີ່ດິນມີ: ດິນປຸກສ້າງ ແລະ ດິນກະສິກຳ.

2. ປະເພດສິ່ງປຸກສ້າງອາຄານມີ: ເຮືອນ, ຕູບ, ອ່າງລ້ຽງປາ, ຮ້ານອາຫານ, ຮົ້ວກໍ່ກຳແພງ, ຫ້ອງນ້ຳ, ເຮືອນຄົວ.

3. ປະເພດຕົ້ນໄມ້ມີ: ຕົ້ນໄມ້ອຸດສະຫະກຳ, ຕົ້ນໄມ້ໃຫ້ໝາກ ແລະ ພືດລະປຸກ.

**ມາດຕາ 8 ຜົນກະທົບຕໍ່ຊັບສິນ**

ການຈັດຕັ້ງປະຕິບັດໂຄງການ ທີ່ມີຜົນກະທົບໂດຍກົງຕໍ່ຊັບສິນຄື:

1. ຜົນກະທົບຖາວອນ ແມ່ນຜົນກະທົບຕໍ່ຊັບສິນ ທີ່ຖືກສູນເສຍການນຳໃຊ້ຢ່າງຖາວອນບໍ່ສາມາດນຳໃຊ້ໄດ້ອີກ.

2. ຜົນກະທົບແບບຊົ່ວຄາວ ແມ່ນຜົນກະທົບຕໍ່ຄ່າເສຍໂອກາດຈາກການນຳໃຊ້ພື້ນທີ່ໃນໄລຍະການກໍ່ສ້າງເທົ່ານັ້ນ ພາຍຫຼັງສຳເລັດການກໍ່ສ້າງໂຄງການ ເຈົ້າຂອງໂຄງການຈະຕ້ອງໄດ້ປັບປຸງໃຫ້ຢູ່ໃນສະພາບເດີມສາມາດນຳໃຊ້ໄດ້ ແລະ ສົ່ງຄືນເຈົ້າຂອງເດີມສືບຕໍ່ນຳໃຊ້.

**ມາດຕາ 9 ລະດັບຜູ້ທີ່ໄດ້ຮັບຜົນກະທົບ**

ຜູ້ທີ່ໄດ້ຮັບຜົນກະທົບມີສີ່ລະດັບ ດັ່ງນີ້:

1. ລະດັບທີ 1 ຜູ້ທີ່ຖືກຍົກຍ້າຍ ແມ່ນຜູ້ທີ່ໄດ້ຮັບຜົນກະທົບ ຕໍ່ທີ່ດິນຢູ່ອາໄສເຊິ່ງເນື້ອທີ່ດິນທີ່ຍັງເຫຼືອແມ່ນບໍ່ພຽງພໍໃນການຢູ່ອາໄສຕໍ່ໄປໄດ້ ຈຳເປັນຕ້ອງໄດ້ຍົກຍ້າຍອອກຈາກບ່ອນເດີມໄປຢູ່ບ່ອນໃໝ່.

2. ລະດັບທີ 2 ຜູ້ທີ່ໄດ້ຮັບຜົນກະທົບຮຸນແຮງ ແມ່ນຜູ້ທີ່ໄດ້ຮັບຜົນກະທົບຕໍ່ຊັບສິນເທົ່າກັບ ຫຼື ຫຼາຍກວ່າ 10 ສ່ວນຮ້ອຍຂຶ້ນໄປຂອງຈຳນວນຊັບສິນທັງໝົດ.

3. ລະດັບທີ 3 ຜູ້ທີ່ຖືກກະທົບລະດັບເບົາ ແມ່ນຜູ້ທີ່ໄດ້ຮັບຜົນກະທົບເບົາບາງ, ຜູ້ໄດ້ຮັບຜົນກະທົບຕໍ່ຊັບສິນຕໍ່າກວ່າ 10 ສ່ວນຮ້ອຍລົງມາຂອງຈຳນວນຊັບສິນທັງໝົດ.

4. ລະດັບທີ 4 ຄອບຄົວຜູ້ດ້ອຍໂອກາດ ແມ່ນຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ ເປັນຄອບຄົວທີ່ມີຄວາມສ່ຽງທີ່ຈະທຸກຍາກຕື່ມ ອັນເນື່ອງມາຈາກການປ່ຽນແປງທາງດ້ານສະພາບແວດລ້ອມ ແລະ ການປັບຕົວຕໍ່ຜົນກະທົບ, ຄອບຄົວດ້ອຍໂອກາດຕ້ອງນອນຢູ່ໃນ 1 ຂອງ 4 ເງື່ອນໄຂ ດັ່ງນີ້:

1) ແມ່ນຜູ້ທີ່ມີລາຍຮັບຕໍ່າກວ່າ ເສັ້ນລະດັບຄວາມທຸກຍາກແຫ່ງຊາດ, ທີ່ໄດ້ກຳນົດໄວ້ຢູ່ໃນເຂດເທດສະບານ 240,000 ກີບ/ຄົນ/ເດືອນ.

2) ແມ່ນຜູ້ຍິງທີ່ເປັນຫົວໜ້າຄອບຄົວ, ຢູ່ຄົນດຽວ, ລ້ຽງລູກດ້ວຍຕົນເອງຕາມລຳພັງ ຫຼື ເປັນຜູ້ດູແລຄົນພິການທາງຮ່າງກາຍ, ເສຍຈິດທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແຕ່ຕ້ອງມີລາຍຮັບຕໍ່າກວ່າເສັ້ນລະດັບຄວາມທຸກຍາກແຫ່ງຊາດ 240,000 ກີບ/ຄົນ/ເດືອນ ໃນເຂດເທດສະບານ.

3) ແມ່ນຜູ້ເຖົ້າທີ່ມີອາຍຸເກີນ 60 ປີ ຂຶ້ນໄປ, ຢູ່ຄົນດຽວບໍ່ມີຜູ້ດູແລເບິ່ງແຍງ.

4) ແມ່ນຫົວໜ້າ ຫຼື ສະມາຊິກໃນຄອບຄົວ ເປັນຄົນພິການທາງຮ່າງກາຍ ຫຼື ເປັນຄົນເສຍຈິດໂດຍບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ບໍ່ສາມາດອອກແຮງງານໄດ້ອາໄສຢູ່ນຳ, ຖືວ່າຕົກໃນມາດຕະຖານຕາມນະໂຍບາຍຊົດເຊີຍພິເສດ ຈາກໂຄງການດັ່ງກ່າວນີ້.

## ໝວດທີ 3
## ນະໂຍບາຍ, ເງື່ອນໄຂ ແລະ ວິທີການທົດແທນ

**ມາດຕາ 10 ນະໂຍບາຍການທົດແທນ**

1. ໃນກໍລະນີຜູ້ໄດ້ຮັບຜົນກະທົບຈາກການເສຍສິດນຳໃຊ້ເນື້ອທີ່ດິນ ທີ່ຖືກຕ້ອງຕາມກົດໝາຍທັງໝົດ ຫຼື 80 ສ່ວນຮ້ອຍຂຶ້ນໄປ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດດ້ວຍການຄິດໄລ່ມູນຄ່າເປັນເງິນ.

2. ໃນກໍລະນີຜູ້ທີ່ໄດ້ຮັບຜົນກະທົບ ຫາກເສຍສິດນຳໃຊ້ເນື້ອທີ່ດິນຢ່າງຖືກຕ້ອງຕາມກົດໝາຍສ່ວນໜຶ່ງ ແລະ ສ່ວນທີ່ຍັງເຫຼືອສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງຮັບຜິດຊອບທົດແທນຄ່າເສຍຫາຍໃນສ່ວນທີ່ຖືກຜົນກະທົບໄປນັ້ນດ້ວຍມູນຄ່າຄິດໄລ່ເປັນເງິນ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອ ຊຶ່ງສາມາດນຳໃຊ້ໄດ້ຢູ່ນັ້ນ ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງໄດ້ຮັບເອກະສານສິດນຳໃຊ້ ເນື້ອທີ່ດິນຕອນດັ່ງກ່າວນັ້ນຄືນໃໝ່ຢ່າງຖືກຕ້ອງ ແລະ ຄົບຖ້ວນ ໂດຍເຈົ້າຂອງໂຄງການຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການດຳເນີນເອກະສານຄືນໃໝ່.

3. ໃນກໍລະນີຜູ້ທີ່ໄດ້ຮັບຜົນກະທົບ ມີສິດນຳໃຊ້ທີ່ດິນໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການຕ້ອງທົດແທນຄ່າເສຍຫາຍ ຕາມທີ່ກຳນົດໄວ້ໃນຂໍ້ 1 ຫຼື ຂໍ້ 3 ຕາມມາດຕານີ້.

4. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບ ບໍ່ມີເອກະສານກ່ຽວກັບການນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, ຂໍ້ 3 ຂອງມາດຕານີ້ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນຕໍ່ການສູນເສຍສິ່ງປຸກສ້າງ, ຕົ້ນໄມ້ ແລະ ພືນລະປູກຈາກເຈົ້າຂອງໂຄງການ ຕາມມູນຄ່າເສຍຫາຍທີ່ຄິດໄລ່.

5. ໃນກໍລະນີການສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າເປັນເງິນປັດຈຸບັນແທນສິ່ງປຸກສ້າງດັ່ງກ່າວໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ໂດຍບໍ່ມີການຫັກຄ່າຫຼູ້ຍຫ້ຽນ ແລະ ບໍ່ມີການຄິດໄລ່ວັດຖຸທີ່ຍັງເຫຼືອເພື່ອຫຼຸດມູນຄ່າທົດແທນ.

6. ໃນກໍລະນີທີ່ດິນ ຫຼື ສິ່ງປຸກສ້າງ ຫາກໄດ້ຮັບຜົນກະທົບຊົ່ວຄາວໃນເວລາດຳເນີນການກໍ່ສ້າງ, ເຈົ້າຂອງໂຄງການຕ້ອງໄດ້ປັບປຸງຄືນໃຫ້ຢູ່ໃນສະພາບເດີມ.

7. ໃນກໍລະນີສູນເສຍຕົ້ນໄມ້, ພືນລະປູກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

8. ໃນກໍລະນີການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆແກ່ຊຸມຊົນ, ເຈົ້າຂອງໂຄງການຕ້ອງໄດ້ປັບປຸງຄືນໃຫ້ຢູ່ໃນສະພາບຄ້າຍຄືເກົ່າ ແລະ ຕ້ອງເອົາໃຈໃສ່ເປັນພິເສດ ຖ້າເປັນການສູນເສຍໂຄງລ່າງພື້ນຖານທາງດ້ານວັດທະນະທຳ, ສາສະໜາ ແລະ ຮີດຄອງປະເພນີ ຂອງປະຊາຊົນທ້ອງຖິ່ນ.

9. ການປະຕິບັດການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ໃນທຸກໆກໍລະນີເຈົ້າຂອງໂຄງການຕ້ອງໄດ້ປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ເພື່ອຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນການທົດແທນຄ່າເສຍຫາຍ.

10. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງຕ່າງໆຕ້ອງໄດ້ສ້າງບົດບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້, ພາຍຫຼັງທີ່ສຳເລັດການແກ້ໄຂຂໍ້ຂັດແຍ່ງແລ້ວ ຈຶ່ງໃຫ້ສະເໜີຂໍການທົດແທນ.

11. ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການຈະໄດ້ຮັບການຊົດເຊີຍ ກ່ອນການກໍ່ສ້າງໂຄງການ ເພື່ອໃຫ້ຜູ້ຖືກຜົນກະທົບມີເງື່ອນໄຂກະກຽມຍົກຍ້າຍ ແລະ ປຸກສ້າງທີ່ຢູ່ອາໃສບ່ອນໃໝ່.

12. ການຄິດໄລ່ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ໄດ້ກຳນົດໄວ້ໃນໝວດທີ 4 ຂອງຂໍ້ຕົກລົງສະບັບນີ້.

13. ການຊ່ວຍເຫຼືອພິເສດ ແມ່ນການຊ່ວຍເຫຼືອ ຄອບຄົວທີ່ມີເງື່ອນໄຂດັ່ງລຸ່ມນີ້:

1) ຄອບຄົວທີ່ໄດ້ຍົກຍ້າຍທີ່ຢູ່ອາໃສ ຈະໄດ້ຮັບການຊ່ວຍເຫຼືອໄລຍະຂ້າມຜ່ານ 03 ເດືອນ.

2) ຄອບຄົວທີ່ໄດ້ຮັບຜົນກະທົບ ລະດັບ 04 ໃນມາດຕາ 09 ຂອງຂໍ້ຕົກລົງສະບັບນີ້.

14. ການທົດແທນຄ່າເສຍໂອກາດ ມີເງື່ອນໄຂ ດັ່ງນີ້:

1) ການລ້ຽງປາກະຊັງໃນໄລຍະການກໍ່ສ້າງ (15 ເດືອນ).

2) ການສູນເສຍລາຍໄດ້ ຂອງຮ້ານຂາຍເຄື່ອງໃນໄລຍະການກໍ່ສ້າງ 03 ເດືອນ.

15. ຊັບສິນທີ່ບໍ່ໄດ້ຮັບການທົດແທນ ມີດັ່ງນີ້:

1) ຕົ້ນດອກໄມ້ ຫຼື ຕົ້ນໄມ້ປະດັບ.

2) ສານພະພູມສ່ວນບຸກຄົນ ທີ່ນອນໃນເຂດສະຫງວນຂອງລັດ, ປ້າຍໂຄສະນາຕ່າງໆ ທີ່ບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກພາກລັດ ແມ່ນຈະບໍ່ໄດ້ຮັບການທົດແທນ.

16. ການທົດແທນຄ່າເສຍຫາຍ ຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ແມ່ນຄິດໄລ່ທົດແທນເປັນເງິນ.

**ມາດຕາ 11 ເງື່ອນໄຂໃນການຂຶ້ນບັນຊີຊັບສິນທີ່ໄດ້ຮັບຜົນກະທົບ**

ເງື່ອນໄຂໃນການຂຶ້ນບັນຊີຊັບສິນທີ່ໄດ້ຮັບຜົນກະທົບ ມີດັ່ງນີ້:

1. ຕ້ອງແມ່ນຊັບສິນທີ່ນອນຢູ່ໃນເຂດພື້ນທີ່ຂອງໂຄງການ.

2. ຕ້ອງແມ່ນຕອນດິນທີ່ມີເອກະສານໃບຕາດິນ ຫຼື ໃບແຈ້ງທີ່ດິນ ຫຼື ໃບຢັ້ງຢືນສິດນຳໃຊ້ທີ່ດິນຕາມປະເພນີ ທີ່ຖືກຕ້ອງຕາມກົດໝາຍ.

3. ຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້.

4. ຕ້ອງແມ່ນຕົ້ນໄມ້ທີ່ມີການຢັ້ງຢືນຈາກເຈົ້າຂອງຜູ້ຄອບຄອງ ພ້ອມດ້ວຍພະຍານຈາກເຈົ້າຂອງດິນອ້ອມຂ້າງ, ອົງການປົກຄອງບ້ານ ແລະ ວິຊາການເກັບກຳຂໍ້ມູນ.

ມາດຕາ 12 ເງື່ອນໄຂການທົດແທນຄ່າເສຍຫາຍ ຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບ

ເງື່ອນໄຂການທົດແທນຄ່າເສຍຫາຍຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ມີດັ່ງນີ້:

1. ຕ້ອງແມ່ນຊັບສິນທີ່ນອນຢູ່ໃນຂອບເຂດໂຄງການ ທີ່ມີກ່ອນມື້ປະກາດເລີ່ມຕົ້ນໂຄງການ ໃນວັນທີ 15 ກຸມພາ 2021.

2. ຕ້ອງແມ່ນຊັບສິນທີ່ໄດ້ຂຶ້ນບັນຊີ, ມີການຮັບຮອງຈາກຄະນະກຳມະການ ແລະ ຮັບຮູ້ຈາກເຈົ້າຂອງກຳມະສິດ.

ມາດຕາ 13 ເງື່ອນໄຂການເບີກຈ່າຍເງິນທົດແທນຄ່າເສຍຫາຍ

ເງື່ອນໄຂການເບີກຈ່າຍເງິນທົດແທນຄ່າເສຍຫາຍ ມີດັ່ງນີ້:

1. ໄດ້ຜ່ານການຕີລາຄາຄິດໄລ່ ຂອງຄະນະກຳມະການໄກ່ເກ່ຍຈັດສັນ - ຍົກຍ້າຍ, ທົດແທນ ແລະ ແກ້ໄຂຄຳຮ້ອງທຸກ ສຳລັບໂຄງການຄວບຄຸມຄວາມສ່ຽງໄພພິບັດນໍ້າຖ້ວມ ຢູ່ເທດສະບານເມືອງປາກຊັນ ຮ່ວມກັບເຈົ້າຂອງກຳມະສິດຜູ້ທີ່ໄດ້ຮັບຜົນກະທົບ ແລະ ໄດ້ຮັບຮອງຈາກປະທານຄະນະກຳມະການ.

2. ມູນຄ່າຂອງການທົດແທນຄ່າເສຍຫາຍທັງໝົດ ຈະຕ້ອງໄດ້ຈ່າຍເງິນທົດແທນເປັນເງິນສົດຜ່ານລະບົບບັນຊີທະນາຄານ ຊຶ່ງແຕ່ລະຄອບຄົວຈະຕ້ອງໄດ້ເປີດບັນຊີທະນາຄານ, ການໂອນແຕ່ລະຄັ້ງຈະໄດ້ຮັບການກວດກາຄວາມຖືກຕ້ອງ ຈາກຄະນະກຳມະການກ່ອນຈຶ່ງໂອນ, ທະນາຄານທີ່ຈະໂອນໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງແມ່ນທະນາຄານທີ່ຢູ່ໃກ້ບ້ານເຈົ້າຂອງຊັບສິນ ເພື່ອໃຫ້ມີຄວາມສະດວກໃນການເຄື່ອນໄຫວທາງດ້ານການເງິນ, ສຳລັບຜູ້ຖືກຜົນກະທົບທີ່ບໍ່ມີບັນຊີທະນາຄານ ເຈົ້າຂອງໂຄງການຕ້ອງຮັບຜິດຊອບໃນການເປີດບັນຊີທະນາຄານໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ.

## ໝວດທີ 4
## ລາຄາຫົວໜ່ວຍ ແລະ ວິທີການຄິດໄລ່ຄ່າທົດແທນຄ່າເສຍຫາຍ

ມາດຕາ 14 ລາຄາຫົວໜ່ວຍການຄິດໄລ່

ລາຄາຫົວໜ່ວຍຄິດໄລ່ການທົດແທນຄ່າເສຍຫາຍ ແມ່ນການກຳນົດເພື່ອຄິດໄລ່ມູນຄ່າຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍແຍກເປັນສາມປະເພດຊັບສິນຫຼັກ ຄື: ທີ່ດິນ, ສິ່ງປຸກສ້າງ ແລະ ຕົ້ນໄມ້ ດັ່ງລາຍລະອຽດລຸ່ມນີ້:

**ຕາຕະລາງ 01 ລາຍລະອຽດຂອງການກຳນົດລາຄາຫົວໜ່ວຍທົດແທນຂອງຊັບສິນແຕ່ລະປະເພດ**

| ລ/ດ | ປະເພດ | ເນື້ອໃນລາຍການ | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| I | ລາຄາຫົວໜ່ວຍທົດແທນທີ່ດິນ | | | | | |
| A | ປະເພດດິນປຸກສ້າງ | | | | | |
| 1 | I | ດິນປຸກສ້າງ | ມີໃບຕາດິນ | ມ2 | 161,334 | |
| 2 | | ດິນປຸກສ້າງ | ມີໃບແຈ້ງທີ່ດິນ | ມ2 | 115,500 | |
| 3 | | ດິນປຸກສ້າງ | ບໍ່ມີໃບຕາດິນ ແຕ່ມີການຢັ້ງຢືນສິດນຳໃຊ້ຕາມປະເພນີ | ມ2 | 96,250 | |
| B | ປະເພດດິນກະສິກຳ | | | | | |
| 4 | II | ດິນສວນ | ມີໃບຕາດິນ | ມ2 | 36,163 | |
| 5 | | ດິນສວນ | ມີໃບແຈ້ງທີ່ດິນ | ມ2 | 29,700 | |
| 6 | | ດິນສວນ | ບໍ່ມີໃບຕາດິນ ແຕ່ມີການຢັ້ງຢືນສິດນຳໃຊ້ຕາມ | ມ2 | 12,650 | |

| | | | | | | |
|---|---|---|---|---|---|---|
| | | | ປະເພນີ | | | |
| II | ລາຄາຫົວໜ່ວຍທົດແທນປະເພດສິ່ງປຸກສ້າງ | | | | | |
| A | ເຮືອນວິນລາສອງຊັ້ນ | | | | | |
| 1 | III | ເຮືອນວິນລາ 2 ຊັ້ນ | ຊັ້ນ 01: ເສົາເຫຼັກ, ຝາດິນກໍ່ດິນຈີ່ ແລະ ໄມ້ປັກເກົ້, ປູໄມ້ປັກເກ້ ແລະ ກາໂລ່ ແລະ ມີເພດານໄມ້ປັກເກ້<br>ຊັ້ນ 02: ເສົາເຫຼັກ, ຝາກໍ່ດິນບັອກ, ປູໄມ້ປັກເກ້ ແລະ ກາໂລ່ ແລະ ມີເພດານກະເບື້ອງແຜ່ນລຽບ | ມ2 | 4,310,804 | |
| B | ເຮືອນວິນລາຊັ້ນດຽວ | | | | | |
| 2 | IV | ເຮືອນວິນລາ ຊັ້ນດຽວ | ເຮືອນຊັ້ນດຽວ, ມຸງກະເບື້ອງ, ແອ້ມຝາດິນຈີ່, ເພດານກະເບື້ອງແຜ່ນລຽບ, ພື້ນປູກາໂລ້ | ມ2 | 2,788,040 | |
| | ເຮືອນຮ້ານ | | | | | |
| 3 | V | ເຮືອນຮ້ານ | ເສົາ: ຊີມັງ; ຝາ: ກໍ່ ແລະ ໂບກເຄິ່ງໜຶ່ງ; ພື້ນ: ປູຊີມັງ; ມຸງ: ດ້ວຍສັງກະສີ, ໂຄງສ້າງໄມ້ | ມ2 | 2,414,500 | |
| C | ເຮືອນຕູບ, ຕູບລ້ຽງປາ ແລະ ຕູບ | | | | | |
| 4 | IV | ເຮືອນຕູບ | ໂຄງສ້າງໄມ້, ເສົາໄມ້, ມຸງດ້ວຍສັງກະສີ, ປູໄມ້ແປ້ນ ແລະ ແອ້ມດ້ວຍຝາກະແຕະ | ມ2 | 766,624 | |
| 5 | IV | ຕູບລ້ຽງປາ | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງສັງກະສີ | ມ2 | 187,000 | |
| 6 | IV | ຕູບ | ໂຄງສ້າງໄມ້ລ່ຽມ, ຝາໄມ້ປ່ອງ, ອາລູຊິ້ງ ແລະ ແອ້ມດ້ວຍຊີມັງ | ມ2 | 517,000 | |
| 7 | IV | ຕູບລ້ຽງປາ | ໂຄງສ້າງໄມ້ລ່ຽມສໍາເລັດຮູບ, ມຸງດ້ວຍສັງກະສີ | ມ3 | 451,000 | |
| D | ຮ້ານອາຫານ, ຮ້ານຂາຍເຄື່ອງ ແລະ ສາລາແຄມນໍ້າຂອງ | | | | | |
| 8 | VI | ຮ້ານອາຫານ | ໂຄງສ້າງເຫຼັກ, ປູໄມ້ແປ້ນ, ບໍ່ໄດ້ແອ້ມ ແລະ ມຸງດ້ວຍອາລູຊິ້ງ | ມ2 | 462,000 | |
| 9 | VI | ຮ້າຂາຍເຄື່ອງ | ໂຄງສ້າງໄມ້, ເສົາໄມ້, ມຸງດ້ວຍສັງກະສີ, ປູໄມ້ແປ້ນ ແລະ ບໍ່ໄດ້ແອ້ມ | ມ2 | 330,000 | |
| 10 | VI | ສາລາແຄມ ນໍ້າຂອງ 01 | ເສົາໄມ້, ປູຊີມັງ ແລະ ມຸງກະເບື້ອງ | ມ2 | 462,000 | |
| 11 | VI | ສາລາແຄມ ນໍ້າຂອງ 02 | ເສົາໄມ້, ປູໄມ້ແປ້ນ ແລະ ມຸງກະເບື້ອງ | ມ2 | 462,000 | |
| 12 | VI | ລູກຕັ່ງຊີມັງ | ລູກຕັ່ງຊີມັງແອ້ມສາລາ | ລູກ | 165,000 | |
| E | ເຮືອນຄົວ, ເທີບເຮືອນ, ກາລາແປງລົດ, ອ່າງລ້ຽງປາ ແລະ ກະຊັງລ້ຽງປາ | | | | | |
| 14 | VII | ຫ້ອງການ | ເສົາເຫຼັກ, ປູຊີມັງ, ແອ້ມແກ້ວ ແລະ ມຸງອາລູຊິ້ງ | ມ2 | 3,771,087 | |
| 15 | VII | ເຮືອນຄົວ 01 | ເສົາໄມ້ກົມ, ມຸງສັງກະສີແຜ່ນລຽບ, ແອ້ມດ້ວຍກໍ່ເຄິ່ງໜຶ່ງ ປະສົມໄມ້ຄົ່ວ | ມ2 | 330,000 | |
| 16 | VII | ເທີບເຮືອນ 04 | ໂຄງສ້າງໄມ້, ເສົາຊີມັງ, ມຸງດ້ວຍສັງກະສີ ແລະ ບໍ່ໄດ້ແອ້ມ | ມ2 | 330,000 | |
| 17 | VII | ເຮືອນຄົວ 02 | ໂຄງສ້າງໄມ້ລ່ຽມ, ປູແປ້ນ, ແອ້ມກະແຕະໄມ້, ມຸງສັງກະສີ | ມ2 | 379,501 | |

| | | | | | | |
|---|---|---|---|---|---|---|
| 18 | | ເທີບເຮືອນ 01 | ເສົາເຫຼັກ, ປູເບຕົງ, ໂຄງໄມ້, ມຸງກະເບື້ອງ ແລະ ບໍ່ໄດ້ແອ້ມ | ມ2 | 407,000 | |
| 19 | | ເທີບເຮືອນ 02 | ເສົາເຫຼັກ, ປູເບຕົງ, ໂຄງເຫຼັກ, ມຸງສັງກະສີ ແລະ ບໍ່ໄດ້ແອ້ມ | ມ2 | 407,000 | |
| 20 | | ເທີບເຮືອນ 03 | ເສົາເຫຼັກ, ປູເບຕົງ, ມຸງແຜ່ນອາລູຊິງ ແລະ ບໍ່ໄດ້ແອ້ມ | ມ2 | 462,000 | |
| 21 | | ກາລາແປງລົດໃຫຍ່ | ເສົາ: ເຫຼັກ, ໂຄງເຫຼັກ, ປູເບຕົງ ແລະ ມຸງອາລູຊິງ | ມ2 | 462,000 | |
| 22 | | ອ່າງລ້ຽງປາ | ອ່າງຊີມັງ ທີ່ກໍ່ດ້ວຍດິນຈີ່,ໂບກ ແລະ ເທພື້ນຂັດມັນ | ມ2 | 352,000 | |
| F | **ປະເພດຫ້ອງນ້ຳ, ອ່າງເກັບນ້ຳ ແລະ ຄອກໄກ່** | | | | | |
| 23 | VIII | ຫ້ອງນ້ຳ 01 | ກໍ່ດິນຈີ່ ແລະ ໂບກເຄິ່ງໜຶ່ງ, ມຸງດ້ວຍສັງກະສີ ແລະ ເສົາຊີມັງ | ມ2 | 1,298,000 | |
| 24 | | ຫ້ອງນ້ຳ 02 | ໂຄງສ້າງໄມ້, ເສົາຊີມັງ, ກໍ່ດ້ວຍດິນບ້ອກ ແລະມຸງດ້ວຍສັງກະສີ | ມ2 | 374,000 | |
| 25 | | ຫ້ອງນ້ຳ 03 | ກໍ່ດ້ວຍດິນຈີ່ ແລະ ໂບກ, ມຸງສັງກະສີ ແລະ ປູກາໂລ້ | ມ2 | 650,000 | |
| 26 | | ຫ້ອງນ້ຳ 04 | ເສົາຊີມັງ, ກໍ່ດິນບ້ອກ ແລະ ມຸງດ້ວຍສັງກະສີ | ມ2 | 374,000 | |
| 27 | | ຫ້ອງນ້ຳ 05 | ໂຄງສ້າງໄມ້, ປູຊີມັງ, ກໍ່ດ້ວຍດິນບ້ອກ ແລະ ມຸງສັງກະສີ | ມ2 | 374,000 | |
| 28 | | ອ່າງເກັບນ້ຳ | ເປັນອ່າງເກັບນ້ຳປະເພດແທ່ງສ້າງຕໍ່ກັນຂຶ້ນ | ແທ່ງສ້າງ | 330,000 | |
| 29 | | ຄອກໄກ່ | ເສົາໄມ້ກົມ, ມຸງສັງກະສີ ແອ້ມຝາກະແຕະ | ມ2 | 250,000 | |
| G | **ປະເພດຮົ້ວ** | | | | | |
| 30 | IX | ຮົ້ວ 01 | ກຳແພງຮົ້ວກໍ່ດ້ວຍດິນຈີ່ ແລະ ໂບກ (ສອງດ້ານ) | ມຍ | 201,382 | |
| 31 | | ຮົ້ວ 02 | ກຳແພງຮົ້ວກໍ່ດ້ວຍດິນບ້ອກບໍ່ໂບກ (ສອງດ້ານ) | ມຍ | 162,489 | |
| 32 | | ຮົ້ວ 03 | ເຫຼັກໜາມໜາກຈັບ | ໂຄ້ງ | 120,000 | |
| 33 | | ຮົ້ວ 04 | ຮົ້ວເສົາເບຕົງ | ຫຼັກ | 24,200 | |
| 34 | | ຮົ້ວ 05 | ຫຼັກຮົ້ວໄມ້ແກນຫຼ້ອນ | ຫຼັກ | 132,000 | |
| 35 | | ຮົ້ວ 06 | ຮົ້ວແອ້ມສັງກະສີ | ແຜ່ນ | 18,333 | |
| H | **ລານເບຕົງ, ເສົາໄຟຟ້າ ແລະ ປ້າຍໂຄສະນາ** | | | | | |
| 36 | X | ລານເບຕົງ 01 | ລານເບຕົງເສີມເຫຼັກ ໜາ 5 ຫາ 10 ຊັງຕີແມັດ | ມ2 | 919,864 | |
| 37 | | ລານເບຕົງ | ລານເບຕົງເສີມເຫຼັກ ໜາ 11 ຫາ 20 ຊັງຕີແມັດ | ມ2 | 1,636,993 | |

| | | | | | | |
|---|---|---|---|---|---|---|
| | | 02 | | | | |
| 38 | | ເສົາໄຟຟ້າ | ເສົາໄຟຟ້າ ເປັນປະເພດເສົາເຫຼັກ | ເສົາ | 770,000 | |
| 39 | | ປ້າຍໂຄສະນາ | ປ້າຍຮ້ານຕ່າງໆທີ່ມີເສົາດຽວ | ປ້າຍ | 126,225 | |

ການກຳນົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ກັບຊັບສິນ ປະເພດຕົ້ນໄມ້ອຸດສະຫະກຳ ແລະ ຕົ້ນໄມ້ໃຫ້ໝາກ ແມ່ນອີງຕາມອາຍຸການດູແລ ແລະ ການປົກປັກຮັກສາ ໂດຍຖືເອົາອາຍຸຂອງຕົ້ນໄມ້ເປັນຫຼັກ ຕາມເຕັກນິກການຄິດໄລ່ ແລະ ປະເມີນເບິ່ງອາຍຸຂອງຕົ້ນໄມ້ ຂອງກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ມາເປັນລາຄາຫົວໜ່ວຍການທົດແທນພື້ນຖານ ຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ເຊິ່ງມີລາຍລະອຽດດັ່ງນີ້:

**ຕາຕະລາງ 02 ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ກັບຊັບສິນປະເພດຕົ້ນໄມ້ອຸດສະຫະກຳ ແລະ ຕົ້ນໄມ້ໃຫ້ໝາກ**

| III | ລາຄາຫົວໜ່ວຍ ທົດແທນປະເພດຕົ້ນໄມ້ ແລະ ຜົນລະປູກ | | ຫົວໜ່ວຍ | ລາຄາ(ກີບ) | ໝາຍເຫດ |
|---|---|---|---|---|---|
| A | ຕົ້ນໄມ້ອຸດສະຫະກຳ | | | | |
| 1 | | ໄມ້ສັກ ອາຍຸ 0-1 ປີ | ຕົ້ນ | 25,000 | |
| 2 | | ໄມ້ສັກ ອາຍຸ >1 ປີ - 2 ປີ | ຕົ້ນ | 30,000 | |
| 3 | | ໄມ້ສັກ ອາຍຸ >2 ປີ - 3 ປີ | ຕົ້ນ | 50,000 | |
| 4 | | ໄມ້ສັກ ອາຍຸ >4 ປີ - 5 ປີ | ຕົ້ນ | 80,000 | |
| 5 | | ໄມ້ສັກ ອາຍຸ >5 ປີ - 6 ປີ | ຕົ້ນ | 150,000 | |
| 6 | | ໄມ້ສັກ ອາຍຸ >6 ປີ | ຕົ້ນ | 200,000 | |
| 7 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ 0-1 ປີ | ຕົ້ນ | 30,000 | |
| 8 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >1 ປີ - 2 ປີ | ຕົ້ນ | 40,000 | |
| 9 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >2 ປີ - 3 ປີ | ຕົ້ນ | 50,000 | |
| 10 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >3 ປີ - 4 ປີ | ຕົ້ນ | 100,000 | |
| 11 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >4 ປີ - 5 ປີ | ຕົ້ນ | 150,000 | |
| 12 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >5 ປີ - 6 ປີ | ຕົ້ນ | 200,000 | |
| 13 | | ໄມ້ດູ່, ໄມ້ຂະຍຸງ, ໄມ້ດູ່ລາຍ ອາຍຸ >6 ປີ | ຕົ້ນ | 300,000 | |
| 14 | XII | ໄມ້ເກດສະໜາ ອາຍຸ 0-1 ປີ | ຕົ້ນ | 25,000 | |
| 15 | | ໄມ້ເກດສະໜາ ອາຍຸ >1 ປີ -2 ປີ | ຕົ້ນ | 35,200 | |
| 16 | | ໄມ້ເກດສະໜາອາຍຸ >2 ປີ -3 ປີ | ຕົ້ນ | 40,000 | |
| 17 | | ໄມ້ເກດສະໜາ ອາຍຸ >3 ປີ - 4 ປີ | ຕົ້ນ | 60,000 | |
| 18 | | ໄມ້ເກດສະໜາ ອາຍຸ >4 ປີ - 5 ປີ | ຕົ້ນ | 100,000 | |
| 19 | | ໄມ້ເກດສະໜາ ອາຍຸ >5 ປີ - 6 ປີ | ຕົ້ນ | 150,000 | |
| 20 | | ໄມ້ເກດສະໜາ ອາຍຸ >6 ປີ | ຕົ້ນ | 200,000 | |

| | | | | | |
|---|---|---|---|---|---|
| 21 | | ໄມ້ແຄນ, ໄມ້ເປືອຍ, ໄມ້ຕາຍໄສ້, ໄມ້ສີລາ, ໄມ້ຂີ້ເຫຼັກ >6 ປີ | ຕົ້ນ | 150,000 | |
| B | ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ດອກ ແລະ ໃບ | | | | |
| 22 | | ຕົ້ນພ້າວ 0-5 ປີ | ຕົ້ນ | 115,500 | |
| 24 | | ຕົ້ນພ້າວ > 5 ປີ | ຕົ້ນ | 371,250 | |
| 25 | | ຕົ້ນໝາກລຳໄຍ, ຕົ້ນໝາກມ່ວງ, ຕົ້ນໝາກຂາມ, ຕົ້ນໝາກນ້ຳນົມ, ຕົ້ນລີດາ, ໝາກເງາະ, ໝາກລິ້ນຈີ່, ຕົ້ນໝາກພຸກ ແລະ ຕົ້ນໝາກມີ້ ອາຍຸ 0-5ປີ | ຕົ້ນ | 86,625 | |
| 26 | | ຕົ້ນໝາກລຳໄຍ, ຕົ້ນໝາກມ່ວງ, ຕົ້ນໝາກຂາມ, ຕົ້ນນ້ຳນົມ, ຕົ້ນໝາກລີດາ, ຕົ້ນໝາກເງາະ, ຕົ້ນໝາກລິ້ນຈີ່, ຕົ້ນໝາກກ້ຽງໃຫຍ່ ແລະ ຕົ້ນໝາກມີ້<br>ອາຍຸ > 5ປີ | ຕົ້ນ | 291,500 | |
| 27 | | ຕົ້ນໝາກມອນໄຂ່, ຕົ້ນໝາກຍົມ, ຕົ້ນໝາກຝາງ, ຕົ້ນໝາກກ້ຽງ, ຕົ້ນໝາກເຟືອງ, ຕົ້ນໝາກຍໍ, ຕົ້ນໝາກກະທັນ, ຕົ້ນໝາກທັນທະລິດ, ຕົ້ນໝາກຂຽບ, ຕົ້ນໝາກຕ້ອງ, ຕົ້ນໝາກງີ້ວ ແລະ ຕົ້ນໝາກຂາມປ້ອມ ອາຍຸ 0-5 ປີ | ຕົ້ນ | 70,400 | |
| 28 | | ຕົ້ນໝາກມອນໄຂ່, ຕົ້ນໝາກຍົມ, ຕົ້ນໝາກຝາງ, ຕົ້ນໝາກກ້ຽງ, ຕົ້ນໝາກເຟືອງ, ຕົ້ນໝາກຍໍ, ຕົ້ນໝາກກະທັນ, ຕົ້ນໝາກກະທັນທະລິດ, ຕົ້ນໝາກຂຽບ, ຕົ້ນໝາກຕ້ອງ, ຕົ້ນໝາກງີ້ວ ແລະ ຕົ້ນໝາກຂາມປ້ອມ ອາຍຸ > 5ປີ | ຕົ້ນ | 217,250 | |
| 29 | | ຕົ້ນໝາກອາໂວກາໂດ ອາຍຸ 0-5 ປີ | ຕົ້ນ | 82,500 | |
| 30 | | ຕົ້ນໝາກອາໂວກາໂດ ອາຍຸ >5 ປີ | ຕົ້ນ | 171,500 | |
| 31 | | ຕົ້ນໝາກຫຸ່ງ ອາຍຸ 0-5 ປີ | ຕົ້ນ | 33,000 | |
| 32 | XIII | ຕົ້ນໝາກຂີ້ຫູດ, ຕົ້ນຂົມກະເດົາ, ຕົ້ນໝາກນາວ, ຕົ້ນໝາກຫຼອດ, ຕົ້ນໝາກກອກນ້ຳ-ທຳມະຊາດ, ຕົ້ນສົ້ມປ່ອຍ, ຕົ້ນໝາກລິ້ນໄມ້, ຕົ້ນໝາກກ້ຽງໃຫຍ່ ແລະ ຕົ້ນຂີ້ເຫຼັກ ອາຍຸ 0-5 ປີ | ຕົ້ນ | 99,000 | |
| 33 | | ຕົ້ນໝາກຂີ້ຫູດ, ຕົ້ນຂົມກະເດົາ, ຕົ້ນໝາກນາວ, ຕົ້ນໝາກຫຼອດ, ຕົ້ນໝາກກອກນ້ຳ-ທຳມະຊາດ, ຕົ້ນສົ້ມປ່ອຍ, ຕົ້ນໝາກລິ້ນໄມ້, ຕົ້ນໝາກກ້ຽງໃຫຍ່ ແລະ ຕົ້ນຂີ້ເຫຼັກ ອາຍຸ >5 ປີ | ຕົ້ນ | 150,000 | |
| 34 | | ຕົ້ນກ້ວຍໃນສຸມທີ່ມີ 5 ໜໍ່ຂຶ້ນໄປ | ສຸມ | 120,000 | |
| 35 | | ຕົ້ນກ້ວຍໃນສຸມທີ່ມີ 1-4 ໜໍ່ລົງມາ | ສຸມ | 80,000 | |
| 36 | | ຕົ້ນໝາກນັດທີ່ສາມາດໃຫ້ໝາກແລ້ວ | ຕົ້ນ | 10,000 | |
| 37 | | ຕົ້ນໝາກນັດທີ່ຍັງບໍ່ທັນໃຫ້ໝາກ | ຕົ້ນ | 5,000 | |
| 38 | | ອ້ອຍເປັນສຸມໃຫຍ່ ມີ 10 ລຳຂຶ້ນໄປ | ສຸມ | 71,500 | |
| 39 | | ອ້ອຍເປັນສຸມນ້ອຍ ມີ 01 - 09 ລຳລົງມາ | ສຸມ | 50,000 | |
| 40 | | ຂ່າ | ສຸມ | 30,000 | |
| 41 | | ຫຍ້າລ້ຽງສັດ | ມ2 | 5,000 | |
| C | ປະເພດໄມ້ປ່ອງ | | | | |
| 41 | XIV | ໄມ້ຊາງໄຜທີ່ເປັນສຸມໃຫຍ່ ມີ 10 ລຳຂຶ້ນໄປ | ສຸມ | 170,500 | |

| | | | | | |
|---|---|---|---|---|---|
| 42 | | ໄມ້ຊາງໄພທີ່ເປັນສຸມນ້ອຍ ມີແຕ່ 01-09 ລຳ | ສຸມ | 100,000 | |
| 43 | | ໄມ້ໄຜ່ບ້ານທີ່ເປັນສຸມໃຫຍ່ ມີ 10 ລຳຂຶ້ນໄປ | ສຸມ | 170,500 | |
| 44 | | ໄມ້ໄຜ່ບ້ານທີ່ເປັນສຸມນ້ອຍ ມີແຕ່ 01-09 ລຳ | ສຸມ | 100,000 | |
| 45 | | ໄມ້ໄຜ່ລ້ຽງນ້ອງທີ່ເປັນສຸມໃຫຍ່ ມີ 10 ລຳຂຶ້ນໄປ | ສຸມ | 120,000 | |
| 46 | | ໄມ້ໄຜ່ລ້ຽງນ້ອງເປັນສຸມນ້ອຍ ມີແຕ່ 01- 09 ລຳ | ສຸມ | 80,000 | |

ຕາຕະລາງ 03: ຄ່າເສຍໂອກາດການລ້ຽງປາກະຊັງ

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາ(ກີບ) | ໝາຍເຫດ |
|---|---|---|---|---|
| 1 | ຄ່າເສຍໂອກາດສຳລັບການລ້ຽງປາກະຊັງຢູ່ນ້ຳຂອງ | ກະຊັງ/ງວດ | 2,020,000 | |

**ມາດຕາ 15 ວິທີການຄິດໄລ່ ມູນຄ່າທົດແທນຄ່າເສຍຫາຍຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບ**

ມູນຄ່າການທົດແທນຄ່າເສຍຫາຍ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບແຕ່ລະປະເພດ ແມ່ນເອົາຫົວໜ່ວຍຊັບສິນທີ່ໄດ້ຮັບຜົນກະທົບຄູນກັບລາຄາຫົວໜ່ວຍທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂ້າງເທິງນັ້ນ ຜົນຄູນດັ່ງກ່າວຈະອອກເປັນມູນຄ່າຂອງຕົວເລກເງິນ, ມູນຄ່າການທົດແທນຄ່າເສຍຫາຍຈະອອກມາຫຼາຍ ຫຼື ໜ້ອຍນັ້ນແມ່ນຂຶ້ນກັບປະລິມານຂອງຊັບສິນ ແລະ ອັດຕາລາຄາຫົວໜ່ວຍທົດແທນ ຊຶ່ງມີວິທີການຄິດໄລ່ດັ່ງນີ້:

1. ປະເພດເນື້ອທີ່ດິນ.

ມີວິທີຄິດໄລ່ ດັ່ງນີ້:

**ມູນຄ່າທົດແທນ (ກີບ) = (ເນື້ອທີ່ດິນທີ່ສູນເສຍ (ມ$^2$) x ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ (ກີບ/ມ$^2$)**

2. ປະເພດຕົ້ນໄມ້ອຸດສະຫະກຳ, ຕົ້ນໄມ້ກິນໝາກ,ໄມ້ປ່ອງ ແລະ ພືດລະປູກ.

ມີວິທີການຄິດໄລ່ດັ່ງນີ້:

**ມູນຄ່າທົດແທນ = (ປະເພດຕົ້ນໄມ້ (ຕົ້ນ/ສຸມ) x ລາຄາຫົວໜ່ວຍທົດແທນ (ກີບ/ມ2)**

- ສຳລັບພືດລະປູກ (ພືດລົ້ມລຸກ): ຈະບໍ່ມີການທົດແທນ ເພາະເວລາກ່ອນຈະລົງມືດຳເນີນການກໍ່ສ້າງ ທາງໂຄງການ ແລະ ບໍລິສັດຜູ້ຮັບເໝົາຈະໄດ້ແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຊາບກ່ອນຢ່າງໜ້ອຍ 6 ເດືອນ ກໍລະນີບໍ່ໄດ້ແຈ້ງ ໂຄງການຈຳເປັນຕ້ອງເຂົ້າໄປນຳໃຊ້ພື້ນທີ່ ໃນເວລາທີ່ພືດຍັງບໍ່ທັນໄດ້ເກັບກ່ຽວ ໂຄງການຕ້ອງຈ່າຍຄ່າທົດແທນພືດ ທີ່ເສຍຫາຍຕາມການປະເມີນຂອງຄະນະກຳມະການ.

3. ປະເພດສິ່ງປຸກສ້າງ.

ສິ່ງປຸກສ້າງທີ່ຖືກຜົນກະທົບຈະຄິດໄລ່ເປັນເນື້ອທີ່ໂດຍໄດ້ຕັ້ງສູດຄິດໄລ່ດັ່ງນີ້:

ໃນກໍລະນີເຮືອນວິນລາຊັ້ນດຽວ ແມ່ນນຳໃຊ້ລາຄາຫົວໜ່ວຍທົດແທນຄ່າເສຍຫາຍປະເພດເຮືອນວິນລາຊັ້ນດຽວ, ໃນກໍລະນີເຮືອນວິນລາ 2 ຊັ້ນ ແມ່ນນຳໃຊ້ລາຄາຫົວໜ່ວຍທົດແທນຄ່າເສຍຫາຍປະເພດເຮືອນວິນລາສອງຊັ້ນ.

**ມູນຄ່າທົດແທນ (ກີບ) = (ປະເພດສິ່ງປຸກສ້າງ (ມ$^2$) x ລາຄາຫົວໜ່ວຍທົດແທນ) (ກີບ/ມ$^2$)**

4. ການຄິດໄລ່ການທົດແທນຄ່າເສຍໂອກາດ.

- ຄິດໄລ່ການທົດແທນຄ່າເສຍໂອກາດ ຂອງຮ້ານຄ້າ/ຮ້ານບໍລິການ.

12 -

| |
|---|
| ຄ່າທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ (ກີບ) = ຄ່າສະເລ່ຍລາຍຮັບເປັນວັນxໄລຍະເວລາ 90ວັນ |

- ການຄິດໄລ່ຄ່າເສຍໂອກາດ ຕໍ່ກັບການລ້ຽງປາກະຊັງ.

ແມ່ນເອົາກຳໄລສຸດທິຕໍ່ໜຶ່ງກະຊັງ ຄູນໃຫ້ຈຳນວນຄັ້ງ (ງວດ) ຄູນໃຫ້ຈຳນວນກະຊັງທີ່ລ້ຽງ ໃນແຕ່ລະງວດ (1 ງວດມີ 04 ເດືອນ) ແລະ ປີໜຶ່ງມີ 03 ງວດ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 16 ພະນັກງານລັດ

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ຮຽກຮ້ອງຮັບສິນບົນເພື່ອຜົນປະໂຫຍດສ່ວນຕົວ ແລະ ພັກພວກ, ສ້າງຂໍ້ມູນບໍ່ມີຄວາມຈິງ ແລະ ປອມແປງເອກະສານ.
2. ໃຊ້ສິດໜ້າທີ່ເກີນຂອບເຂດ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ແລະ ປະຊາຊົນ.
3. ເມີນເສີຍ, ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້.
4. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາ ການພິຈາລະນາເອກະສານຕ່າງໆ ຂອງຜູ້ມາລົງທຶນໂດຍບໍ່ມີເຫດຜົນ.
5. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ມາລົງທຶນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບທີ່ສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ.
6. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ແລະ ນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອຜົນປະໂຫຍດສ່ວນຕົວ ແລະ ນຳໃຊ້ເງິນທົດແທນໄປໃນທາງທີ່ບໍ່ຖືກຕ້ອງ.

### ມາດຕາ 17 ອຳນາດການປົກຄອງບ້ານ

ສວຍໃຊ້ສິດອຳນາດ, ໜ້າທີ່, ຕຳແໜ່ງເກີນຂອບເຂດ, ຮັບສິນບົນ, ສ້າງຂໍ້ມູນບໍ່ຖືກຕ້ອງ, ປອມແປງເອກະສານ, ບັງຄັບນາບຂູ່ປະຊາຊົນ, ຂັດຂວາງການຈັດຕັ້ງປະຕິບັດໜ້າທີ່ ຂອງພະນັກງານທີ່ກ່ຽວຂ້ອງໃນເວລາລົງຈັດຕັ້ງປະຕິບັດວຽກງານ.

### ມາດຕາ 18 ປະຊາຊົນບ້ານເປົ້າໝາຍ

ຫ້າມໃຫ້ຂໍ້ມູນບໍ່ມີຄວາມຈິງ, ປອມແປງເອກະສານ, ບໍ່ໃຫ້ຄວາມຮ່ວມມື, ມີພຶດຕິກຳຂັດຂວາງ, ນາບຂູ່ຕໍ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງໃນເວລາລົງຈັດຕັ້ງປະຕິບັດໜ້າທີ່ວຽກງານ, ທວງເອົາ ຫຼື ຮຽກຮ້ອງຄ່າຕອບແທນເກີນຄວາມເປັນຈິງ ໃນກໍລະນີທີ່ລັດໄດ້ທົດແທນໃຫ້.

## ໝວດທີ 6
## ອົງການຄຸ້ມຄອງ

### ມາດຕາ 19 ອົງການຄຸ້ມຄອງ ລາຄາຫົວໜ່ວຍ ທົດແທນຄ່າເສຍຫາຍ

1. ຄະນະກຳມະການໄກ່ເກ່ຍຍົກຍ້າຍ-ຈັດສັນ, ທົດແທນ ແລະ ແກ້ໄຂຄຳຮ້ອງທຸກ.
2. ຄະນະຮັບຜິດຊອບ, ຮ່າງຂໍ້ຕົກລົງວ່າດ້ວຍນະໂຍບາຍລາຄາຫົວໜ່ວຍທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບ.
3. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ.
4. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ.

5. ອົງການປົກຄອງບ້ານທີ່ກ່ຽວຂ້ອງ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຄະນະກຳມະການໄກ່ເກ່ຍຍົກຍ້າຍ-ຈັດສັນ, ທົດແທນ ແລະ ແກ້ໄຂຄຳຮ້ອງທຸກ**

1. ມີໜ້າທີ່ຕິດຕາມ, ກວດກາ, ຂັ້ນຕອນການຍົກຍ້າຍ ແລະ ຊົດເຊີຍ ລວມທັງໃຫ້ຄຳປຶກສາ, ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການໃຫ້ແກ່ຊຸມຊົນ ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ທົບທວນແຜນການຍົກຍ້າຍຈັດສັນ.

2. ຈັດກອງປະຊຸມຄົ້ນຄວ້າ, ປຶກສາຫາລືພາຍໃນຄະນະກຳມະການຊີ້ນຳລວມ ເພື່ອວາງແຜນການຈັດຕັ້ງປະຕິບັດການໄກ່ເກ່ຍ, ຍົກຍ້າຍສິ່ງກີດຂວາງ ພ້ອມທັງແບ່ງຄວາມຮັບຜິດຊອບພາຍໃນຄະນະໃຫ້ລະອຽດ.

3. ຈັດກອງປະຊຸມຮ່ວມກັບຄະນະກຳມະການກອງເລຂາ ເພື່ອຊີ້ນຳແບບແຜນໃນການຈັດຕັ້ງປະຕິບັດການໄກ່ເກ່ຍ, ຈັດສັນຍົກຍ້າຍ ສິ່ງກີດຂວາງໂຄງການກໍ່ສ້າງໃຫ້ຄະນະກຳມະການກອງເລຂາເຂົ້າໃຈໃນການຈັດຕັ້ງປະຕິບັດ.

4. ຊີ້ນຳ - ນຳພາຄະນະກຳມະການກອງເລຂາ ຈັດຕັ້ງປະຕິບັດໃຫ້ໄປຕາມແຕ່ລະຂັ້ນຕອນທີ່ວາງແຜນໄວ້ໃຫ້ມີປະສິດທິພາບ, ພ້ອມທັງຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຢູ່ແຕ່ລະຈຸດ.

5. ຄົ້ນຄວ້າ ແລະ ຮັບຮອງເອົາມາດຕະຖານ ແລະ ຮູບແບບການຊົດເຊີຍຄ່າຈັດສັນຍົກຍ້າຍ ສິ່ງປຸກສ້າງອື່ນໆ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເພື່ອນຳສະເໜີຂັ້ນເທິງພິຈາລະນາ.

6. ຮັບເອົາການສ່ອງແສງລາຍງານ ຈາກຄະນະກຳມະການກອງເລຂາເປັນປົກກະຕິ, ຖ້າມີບັນຫາຫຍຸ້ງຍາກກໍ່ຕ້ອງຊອກຫາວິທີແກ້ໄຂໃຫ້ທັນກັບສະພາບການ.

7. ຈັດຕັ້ງປະຕິບັດຕາມການມອບໝາຍຈາກຫົວໜ້າຄະນະ, ສັງລວມລາຍງານຜົນຂອງການຈັດຕັ້ງປະຕິບັດວຽກໃຫ້ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ.

**ມາດຕາ 21 ສິດ ແລະ ໜ້າທີ່ຄະນະຮັບຜິດຊອບ, ຮ່າງຂໍ້ຕົກລົງ ວ່າດ້ວຍນະໂຍບາຍລາຄາຫົວໜ່ວຍທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບ**

1. ຄົ້ນຄ້ວາທາງດ້ານນະໂຍບາຍ, ລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ທີ່ຕິດພັນກັບວຽກງານລາຄາຫົວໜ່ວຍທົດແທນໃຫ້ສອດຄອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ.

2. ກວດກາດ້ານລາຄາ, ຈຳນວນ ແລະ ປັດໃຈຕ່າງໆທີ່ກ່ຽວຂ້ອງຕໍ່ກັບນິຕິກຳສະບັບດັ່ງກ່າວ.

3. ນຳສະເໜີ, ຊີ້ແຈ້ງ ແລະ ລາຍງານຂັ້ນເທິງ ດ້ານການຈັດຕັ້ງປະຕິບັດ ແລະ ລົງເຜີຍແຜ່, ແນະນຳເພື່ອໃຫ້ມີຄວາມເປັນເອກະພາບຕໍ່ກັບນິຕິກຳ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍສະບັບດັ່ງກ່າວ.

3. ໃຫ້ຄຳປຶກສາ, ແນະນຳ, ປະກອບຄຳຄິດຄຳເຫັນ ຊ່ວຍໂຄງການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ**

1. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ເຂົ້າຮ່ວມການປຶກສາຫາລືວຽກງານການສ້າງນິຕິກຳທົດແທນຄ່າເສຍຫາຍຈາກໂຄງການ.

2. ຕິດຕາມ, ກວດສອບ ການຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍຈາກໂຄງການ.

3. ເຂົ້າຮ່ວມການປຶກສາຫາລື ກ່ຽວກັບການອອກນະໂຍບາຍ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ແລະ ຂໍ້ກຳນົດອື່ນໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍ.

4. ເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ຜູ້ໄດ້ຮັບຜົນກະທົບໃນເຂດໂຄງການໃຫ້ທົ່ວເຖິງ, ເຂົ້າຮ່ວມການເກັບກຳຂໍ້ມູນຜູ້ມີຄຳເຫັນ ຫຼື ຂໍ້ສະເໜີໃນການຈັດຕັ້ງປະຕິບັດໂຄງການ.

5. ເຜີຍແຜ່ນະໂຍບາຍ ແລະ ສິດທິໃຫ້ຜູ້ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຊາບ ຕໍ່ແນວທາງການພັດທະນາຂອງໂຄງການ, ຊຸກຍູ້ ແລະ ລະດົມແນວຄິດ ຂອງຜູ້ໄດ້ຮັບຜົນກະທົບໃຫ້ເຂົ້າໃຈຕໍ່ແນວທາງການພັດທະນາໂຄງການໃຫ້ໄດ້ຮັບໝາກຜົນ.

6. ເຂົ້າຮ່ວມຂະບວນການທົດແທນຄ່າເສຍຫາຍຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເລດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງການທົດແທນຄ່າເສຍຫາຍ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ.

7. ລາຍງານວຽກງານທົດແທນຄ່າເສຍຫາຍໃຫ້ໂຄງການ ແລະ ແຂວງ ເພື່ອຊາບ.

## ມາດຕາ 23 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ

1. ມີສິດ ແລະ ໜ້າທີ່ໃນການຊຸກຍູ້, ຕິດຕາມ, ກວດກາ, ໃຫ້ຄຳປຶກສາຜູ້ທີ່ໄດ້ຮັບຜົນກະທົບ.

2. ຊ່ວຍພະແນກໂຍທາທິການ ແລະ ຂົນສົ່ງ ປະສານງານລະຫວ່າງໂຄງການ, ພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ແລະ ບ້ານ.

3. ລາຍງານຂັ້ນເທິງ ຕໍ່ກັບການຈັດຕັ້ງປະຕິບັດວຽກງານຕາມສາຍຕັ້ງ ແລະ ສາຍຂວາງ ຢ່າງເປັນປົກກະຕິ.

4. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ.

## ມາດຕາ 24 ສິດ ແລະ ໜ້າທີ່ ຂອງອົງການປົກຄອງ ບ້ານທີ່ ກ່ຽວຂ້ອງ

1. ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ ກ່ຽວກັບການປຸກລະດົມທຸກພາກສ່ວນ ແລະ ປະຊາຊົນທຸກຊັ້ນຄົນພາຍໃນບ້ານ ຕັ້ງໜ້າປະກອບສ່ວນເຂົ້າຮ່ວມໃນການພັດທະນາຕົວເມືອງປາກຊັນ ໃຫ້ຈະເລີນກ້າວໜ້າໂດຍໄວ.

2. ຢັ້ງຢືນຄວາມຖືກຕ້ອງ ຂໍ້ມູນຊັບສິນຂອງຜູ້ໄດ້ຮັບຜົນກະທົບ, ຮັບຜິດຊອບຂົນຂວາຍຕໍ່ການເຂົ້າຮ່ວມເຜີຍແຜ່ນິຕິກຳຕ່າງໆຂອງໂຄງການ.

3. ເປັນຕົວແທນໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແລະ ປະກອບຄຳຄິດເຫັນ ໃນການຄັດເລືອກເອົາລາຄາຫົວໜ່ວຍທົດແທນຄ່າເສຍຫາຍທີ່ເໝາະສົມ.

4. ປະຕິບັດວຽກງານອື່ນໆ ທີ່ກ່ຽວຂ້ອງກັບ ວຽກງານລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ.

5. ສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

6. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຂອງໂຄງການ ໃນເຂດເຂດທີ່ຕົນຮັບຜິດຊອບ.

7. ເປັນເຈົ້າການເຂົ້າຮ່ວມຂະບວນການໄກ່ເກ່ຍຄຳຮ້ອງທຸກທີ່ເກີດຂຶ້ນ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ, ສັງລວມບັນຫາທີ່ເກີດຂຶ້ນ ແລະ ແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງໄດ້ຮັບຊາບ ຕາມຂັ້ນຕອນ.

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

# ໝວດທີ 7

# ການກວດກາ

## ມາດຕາ 25 ອົງການກວດກາພາຍໃນ

1. ຜູ້ໃຫ້ທຶນ ໂຄງການ.
2. ຄະນະຊີ້ນຳໂຄງການຂັ້ນ ແຂວງ.
3. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ.
4. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງປາກຊັນ.
5. ອົງການປົກຄອງບ້ານ ສາມບ້ານ.

ມາດຕາ 26 ອົງການກວດກາ ພາຍນອກ

1. ສະພາປະຊາຊົນແຂວງ.

2. ອົງການກວດກາລັດແຂວງ.

3. ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ.

ມາດຕາ 27 ເນື້ອໃນກວດກາ

1. ກວດກາການຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍ ຈາກຜົນກະທົບຂອງໂຄງການຄວບຄຸມຄວາມສ່ຽງໄພພິບັດນໍ້າຖ້ວມ ຢູ່ເທດສະບານເມືອງປາກຊັນ ຕາມຂໍ້ຕົກລົງສະບັບນີ້.

2. ກວດກາຄໍາຮ້ອງທຸກ ແລະ ຂໍ້ມູນຜູ້ທີ່ໄດ້ຮັບຜົນກະທົບໃຫ້ໄດ້ຮັບການແກ້ໄຂສອດຄ່ອງ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທໍາ.

ມາດຕາ 28 ຮູບການກວດກາ

1. ກວດກາປົກກະຕິ ແມ່ນການກວດກາການດໍາເນີນງານໄປຕາມແຜນການ, ແຜນງານ, ໂຄງການ ແລະ ໜ້າວຽກ ທີ່ໄດ້ກໍານົດໄວ້ໃນເວລາອັນແນ່ນອນ.

2. ກວດກາໂດຍມີການແຈ້ງລ່ວງໜ້າ ແມ່ນການກວດກາ, ການອອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ຫຼື ຄໍາສະເໜີ ຂອງຜູ້ໄດ້ຮັບຜົນກະທົບ, ໂດຍໄດ້ແຈ້ງໃຫ້ຜູ້ຖືກກວດກາຮັບຊາບລ່ວງໜ້າ.

3. ກວດກາແບບກະທັນຫັນ ແມ່ນການກວດກາການອກແຜນທີ່ມີຄວາມຈໍາເປັນ, ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮັບຊາບລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບການ.

ມາດຕາ 30 ມາດຕະການຕໍ່ ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີໜັກ ຫຼື ເບົາຢ່າງທັນການ.

**ມາດຕາ 31 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຕໍ່າກວ່າຫ້າແສນກີບລົງມາ ຈະຕ້ອງໄດ້ຖືກຕັກເຕືອນ ແລະ ສຶກສາອົບຮົມ, ກໍລະນີທີ່ມີການກະທໍາຜິດເປັນອາຈິນ ແລະ ມີຜົນເສຍຫາຍເກີນຫ້າແສນກີບຂຶ້ນໄປ ຈະຖືກດໍາເນີນຄະດີຕາມກົດໝາຍ.

**ມາດຕາ 32 ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເກີດການກະທໍາຜິດທາງອາຍາ ຈະຖືກຕັກເຕືອນ ຫຼື ກໍລະນີບໍ່ຈິງໃຈລາຍງານ, ຫຼົບຫຼີກຈາກການກະທໍາຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນ, ເລື່ອນຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕໍາແໜ່ງ, ຍົກຍ້າຍໄປຮັບໜ້າທີ່ໃໝ່ທີ່ຕໍ່າກວ່າເກົ່າ ແລະ ໃຫ້ອອກຈາກລັດຖະກອນ.

**ມາດຕາ 33 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການ ແມ່ນຈະຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 34 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍໃຫ້ແກ່ສິດຜົນປະໂຫຍດຂອງລັດ ແລະ ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ຈະຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະຊີ້ນຳຂັ້ນແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ອົງການປົກຄອງບ້ານ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນເຈົ້າແຂວງລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ. ໒ .

ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ